**Learn Lao: Practice Sheet - Week: ___5___**



Ya
[Yah]

Yaw
(Y /or/ ii)

ຍ



Rrah-khang
/or/
[Lah-khang]

Rraw
(rr /or/ L)

ຣ



Ling

Law
(L)

ລ



Vii
[Vee]

Vaw
(V / W)

ວ



Hän
[Hähn]

Haw
(H)

ຫ



Oh
[Öh]

Aw
(Silent or Aw)

ອ

| | |
|---|---|
| <br>Haw<br>(H)<br>ຮ<br>Heuon<br>[Heü on] | **Note:**<br>ຫ ຫ<br>Haw (H) /or/ Haw (H) |

**Learn Lao:  Practice Sheet - Sight Reading - Find the Letters You Know**

Instructions:  Look through the following Lao text and highlight/underline/or/circle the letters you have learned.  Then count how many times each letter appears.

ບົດຮຽນ 1

# ຂ່າວດີເລື່ອງຫຍັງ?

## 1. ພະເຈົ້າມີຂ່າວສານຫຍັງ?

ພະເຈົ້າຢາກໃຫ້ຄົນເຮົາມີຊີວິດຢູ່ໃນໂລກຢ່າງມີຄວາມສຸກ. ພະອົງສ້າງໂລກແລະທຸກສິ່ງເພາະວ່າພະອົງຮັກມະນຸດ. ອີກບໍ່ດົນພະອົງຈະລຶບລ້າງຄວາມທຸກຍາກທຸກຢ່າງ ແລະເຮັດໃຫ້ມະນຸດໃນທົ່ວໂລກມີຊີວິດທີ່ດີຂຶ້ນ.—ອ່ານເຢເຣມີ 29:11

ບໍ່ເຄີຍມີການປົກຄອງໃດໆທີ່ເຮັດໃຫ້ຄວາມຮຸນແຮງ ໂລກໄພໄຂ້ເຈັບ ຫຼືຄວາມຕາຍໝົດໄປໄດ້. ແຕ່ວ່າມີຂ່າວທີ່ໜ້າຍິນດີ ອີກບໍ່ດົນພະເຈົ້າຈະຕັ້ງການປົກຄອງຂອງພະອົງຂຶ້ນແທນການປົກຄອງທັງໝົດ. ຜູ້ທີ່ຢູ່ໃຕ້ການປົກຄອງຂອງພະອົງຈະມີສັນຕິສຸກ ແລະມີສຸຂະພາບທີ່ແຂງແຮງ.—ອ່ານເອຊາອີ 25:8; 33:24; ດານຽນ 2:44

## 2. ເປັນຫຍັງຂ່າວດີຈຶ່ງເປັນເລື່ອງຮີບດ່ວນ?

ຄວາມທຸກລຳບາກຈະສິ້ນສຸດເມື່ອພະເຈົ້າກວາດລ້າງຄົນຊົ່ວໃຫ້ໝົດໄປຈາກໂລກ. (ໂຊໂຟນີ 2:3) ນັ້ນຈະເກີດຂຶ້ນເມື່ອໃດ? ພະຄຳຂອງພະເຈົ້າບອກລ່ວງໜ້າເຖິງສະພາບການທີ່ເປັນໄພຕໍ່ມະນຸດໃນເວລານີ້.
ສິ່ງທີ່ເກີດຂຶ້ນໃນປັດຈຸບັນນີ້ບົ່ງຊີ້ວ່າເວລາທີ່ພະເຈົ້າຈະປ່ຽນແປງສະພາບການນີ້ໃກ້ເຂົ້າມາແລ້ວ.—ອ່ານ 2 ຕີໂມເຕ 3:1-5

3. ເຮົາຄວນຈະເຮັດແນວໃດ?
ເຮົາຄວນຮຽນຮູ້ເລື່ອງພະເຈົ້າຈາກພະຄຳຂອງພະອົງ ຄຳພີໄບເບິນ.
ພະຄຳຂອງພະເຈົ້າປຽບເໝືອນຈົດໝາຍຈາກພໍ່ຜູ້ທີ່ມີຄວາມຮັກສົ່ງເຖິງລູກ.
ພະຄຳພີບອກໃຫ້ເຮົາຮູ້ວິທີທີ່ຈະມີຄວາມສຸກໃນຕອນນີ້ແລະວິທີທີ່ຈະມີຊີວິດຕະຫຼອດໄປຢ່າງມີຄວາມສຸກໃນອະນາຄົດ. ທີ່ຈິງ
ບາງຄົນອາດຈະບໍ່ຢາກໃຫ້ທ່ານຮຽນຮູ້ກ່ຽວກັບຄຳພີໄບເບິນ. ແຕ່ວ່າບໍ່ຄວນປ່ອຍໃຫ້ການຈະໄດ້ອະນາຄົດທີ່ດີນັ້ນເສຍໄປ.—ອ່ານສຸພາສິດ 29:25; ຄຳປາກົດ 14:6, 7